ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໄປສະນີ,

ໂທລະຄົມມະນາຄົມ ແລະ ການສື່ສານ

2530

ເລກທີ............/ປທສ

ນະຄອນຫຼວງວຽງຈັນ, ວັນທີ 22 SEP 2015

# ຂໍ້ຕົກລົງ

# ວ່າດ້ວຍການອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ

- ອີງຕາມກົດໝາຍວ່າດ້ວຍການໂທລະຄົມມະນາຄົມ (ສະບັບປັບປຸງ) ສະບັບເລກທີ 09/ສພຊ, ລົງວັນທີ 21 ທັນວາ 2011.
- ອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນສະບັບເລກທີ 02/ສພຊ, ລົງວັນທີ 08 ກໍລະກົດ 2009.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

**ລັດຖະມົນຕີວ່າການກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານອອກຂໍ້ຕົກລົງ**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ.**

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຕິດຕາມ, ກວດກາ ແລະ ຄຸ້ມຄອງ ການອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ, ເພື່ອເຮັດໃຫ້ການບໍລິການອິນເຕີເນັດ ມີຄວາມຖືກຕ້ອງ ແລະ ເປັນລະບຽບ, ແນໃສ່ສົ່ງເສີມການນຳໃຊ້ອິນເຕີເນັດໃຫ້ມີຄຸນນະພາບ, ສະດວກ, ວ່ອງໄວ, ປອດໄພ ແລະ ທົ່ວເຖິງ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2. ການອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ**

ການອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ ແມ່ນການອະນຸຍາດໃຫ້ບຸກຄົນ ແລະ ນິຕິບຸກຄົນ ດຳເນີນທຸລະກິດບໍລິການອິນເຕີເນັດ ໂດຍຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, ໃນການສະໜອງບໍລິການອິນເຕີເນັດໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ.

**ມາດຕາ 3. ອະທິບາຍຄຳສັບ**

**ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:**

1. **ການບໍລິການອິນເຕີເນັດ (Internet service)** ໝາຍເຖິງ ຮູບແບບການບໍລິການໜຶ່ງຂອງການບໍລິການໂທລະຄົມມະນາຄົມທີ່ສະໜອງການບໍລິການໃຫ້ແກ່ຜູ້ຊົມໃຊ້ສາມາດເຂົ້າເຖິງອິນເຕີເນັດໄດ້ດ້ວຍວິທີເຊື່ອມຕໍ່ແບບມີສາຍ ຫຼື ບໍ່ມີສາຍ;
2. **ຜູ້ໃຫ້ບໍລິການອິນເຕີເນັດ (Internet Service Provider)** ໝາຍເຖິງ ຜູ້ໄດ້ຮັບອະນຸຍາດໃຫ້ບໍລິການອິນເຕີເນັດ;
3. **ຜູ້ຊົມໃຊ້ອິນເຕີເນັດ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ນຳໃຊ້ອິນເຕີເນັດຂອງຜູ້ໃຫ້ບໍລິການອິນເຕີເນັດ ຫຼື ຢູ່ສະຖານທີ່ໃຫ້ບໍລິການອິນເຕີເນັດກາເຟ;
4. **ການເຊື່ອມຕໍ່ແບບມີສາຍ** ໝາຍເຖິງ ການເຊື່ອມຕໍ່ທີ່ນຳໃຊ້ສາຍສິ່ງຕ່າງໆເປັນຕົວນຳສົ່ງສັນຍານ ເປັນຕົ້ນ: Dial-Up, xDSL, FTTx, Cable TV ແລະ ອື່ນໆ;
5. **ການເຊື່ອມຕໍ່ແບບບໍ່ມີສາຍ** ໝາຍເຖິງ ການເຊື່ອມຕໍ່ທີ່ນຳໃຊ້ຄື້ນຄວາມຖີ່ວິທະຍຸເປັນຕົວນຳສົ່ງສັນຍານ ເປັນຕົ້ນ: WiMax, Wi-Fi, Satellite, 3G/4G/5G ແລະ ອື່ນໆ;
6. **ປະເພດບໍລິການ** ໝາຍເຖິງ ການບໍລິການຕ່າງໆທີ່ຜູ້ໃຫ້ບໍລິການອິນເຕີເນັດສະໜອງແກ່ຜູ້ຊົມໃຊ້ອິນເຕີເນັດ ເປັນຕົ້ນ: xDSL, FTTX, Wi-Fi, Hosting, E-mail, IPTV ແລະ ອື່ນໆ.

**ມາດຕາ 4. ຫຼັກການພື້ນຖານໃນການດຳເນີນທຸລະກິດບໍລິການອິນເຕີເນັດ**

ການບໍລິການອິນເຕີເນັດ ຕ້ອງປະຕິບັດຕາມຫຼັກການພື້ນຖານ ດັ່ງລຸ່ມນີ້:

1. ຮັບປະກັນການບໍລິການອິນເຕີເນັດ ໃຫ້ສະເໝີພາບກັນທົ່ວປະເທດ;
2. ຮັບປະກັນການຂະຫຍາຍຕາໜ່າງອິນເຕີເນັດ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນການນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ຢ່າງມີປະສິດທິພາບ ແລະ ພາວະວິໃສ;
4. ຮັບປະກັນມາດຕະຖານເຕັກນິກ ແລະ ການເຊື່ອມຕໍ່ເຂົ້າກັບເຄືອຂ່າຍອິນເຕີເນັດ ທັງພາຍໃນ ແລະ ສາກົນ ໃຫ້ມີປະສິດທິພາບສູງ, ວ່ອງໄວ ແລະ ມີຄຸນນະພາບ;
5. ຮັບປະກັນສິດຜົນປະໂຫຍດ ຂອງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການອິນເຕີເນັດ;
6. ຮັບປະກັນການເຊື່ອມຕໍ່ເຄືອຂ່າຍອິນເຕີເນັດ ລວມສູນຜ່ານປະຕູດຽວ.

**ມາດຕາ 5. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບບຸກຄົນ ຫຼື ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ໃຫ້ບໍລິການ ຫຼື ໃຊ້ບໍລິການອິນເຕີເນັດ ຢູ່ພາຍໃນ ສປປ ລາວ.

## ໝວດທີ 2
## ການດຳເນີນທຸລະກິດບໍລິການອິນເຕີເນັດ

**ມາດຕາ 6. ການຂໍອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນທຸລະກິດບໍລິການອິນເຕີເນັດ ຕ້ອງຂໍອະນຸຍາດນຳຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໂດຍການປະກອບເອກະສານຄຳຮ້ອງ ແລະ ເອກະສານອື່ນ ຕາມການກຳນົດຂອງຂະແໜງ ປທສ, ພ້ອມທັງປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 7. ເງື່ອນໄຂພິຈາລະນາອອກໃບອະນຸຍາດ**

ເງື່ອນໄຂໃນການພິຈາລະນາອອກໃບອະນຸຍາດບໍລິການອິນເຕີເນັດມີດັ່ງນີ້:

1. ຕ້ອງມີໃບຄຳຮ້ອງ, ບົດວິພາກເສດຖະກິດ, ບົດວິພາກເຕັກນິກ ແລະ ເອກະສານອື່ນໆ ຕາມການກຳນົດຂອງຂະແໜງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃນເອກະສານຊ້ອນທ້າຍ;
2. ຕ້ອງມີວິຊາການທີ່ກ່ຽວຂ້ອງ ຢ່າງພຽງພໍກັບປະເພດ ແລະ ຂອບເຂດ ຂອງການບໍລິການ;
3. ໃນກໍລະນີມີການນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ແລະ/ຫຼື ກໍ່ສ້າງເຄືອຂ່າຍໂທລະຄົມມະນາຄົມ, ຕ້ອງມີໃບອະນຸຍາດຈາກຂະແໜງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
4. ຕ້ອງບໍ່ຢູ່ໃນຊ່ວງໄລຍະຖືກອາຍັດຊັບສິນ, ຢູ່ໃນຂະບວນການລົ້ມລະລາຍ ຫຼື ຖືກສານຕັດສິນເປັນຜູ້ລົ້ມລະລາຍ ຕາມກົດໝາຍຂອງ ສປປລາວ;
5. ປະຕິບັດຕາມເງື່ອນໄຂອື່ນທີ່ຂະແໜງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກຳນົດໃຫ້.

**ມາດຕາ 8. ໄລຍະເວລາພິຈາລະນາອອກໃບອະນຸຍາດ**

ອົງການຄຸ້ມຄອງ ແລະ ກວດກາການບໍລິການອິນເຕີເນັດ ຈະພິຈາລະນາອອກໃບອະນຸຍາດ ຕາມໄລຍະເວລາຂອງແຕ່ລະປະເພດ ດັ່ງລຸ່ມນີ້:

- ໃບອະນຸຍາດປະເພດ 1 ໃຊ້ເວລາພິຈາລະນາພາຍໃນ 30 ວັນລັດຖະການ.
- ໃບອະນຸຍາດປະເພດ 2 ໃຊ້ເວລາພິຈາລະນາພາຍໃນ 20 ວັນລັດຖະການ.
- ໃບອະນຸຍາດປະເພດ 3 ໃຊ້ເວລາພິຈາລະນາພາຍໃນ 15 ວັນລັດຖະການ.

## ໝວດທີ 3
## ປະເພດ ແລະ ອາຍຸຂອງໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ

**ມາດຕາ 9. ປະເພດໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ**

ໃບອະນຸຍາດໃຫ້ບໍລິການອິນເຕີເນັດມີ 3 ປະເພດ ດັ່ງນີ້:

ໃບອະນຸຍາດປະເພດ 1 : ແມ່ນໃບອະນຸຍາດສຳລັບຜູ້ໃຫ້ບໍລິການອິນເຕີເນັດ ທີ່ມີເຄືອຂ່າຍເປັນຂອງຕົນເອງ, ສາມາດໃຫ້ບໍລິການໃນຂອບເຂດທົ່ວປະເທດ;

ໃບອະນຸຍາດປະເພດ 2 : ແມ່ນໃບອະນຸຍາດສຳລັບຜູ້ໃຫ້ບໍລິການອິນເຕີເນັດ ທີ່ມີ ຫຼື ບໍ່ມີເຄືອຂ່າຍເປັນຂອງຕົນເອງ, ສາມາດໃຫ້ບໍລິການໃນຂອບເຂດແຂວງ/ນະຄອນໃດໜຶ່ງ;

ໃບອະນຸຍາດປະເພດ 3 : ແມ່ນໃບອະນຸຍາດສຳລັບຜູ້ໃຫ້ບໍລິການອິນເຕີເນັດ ທີ່ມີ ຫຼື ບໍ່ມີເຄືອຂ່າຍເປັນຂອງຕົນເອງ, ສາມາດໃຫ້ບໍລິການໃນຂອບເຂດເມືອງໃດໜຶ່ງ.

**ມາດຕາ 10. ອາຍຸຂອງໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ**

ອາຍຸຂອງໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ ແບ່ງອອກເປັນ 2 ໄລຍະຄື:

1. ໄລຍະທີໜຶ່ງ: ອອກໃບອະນຸຍາດຊົ່ວຄາວ ຊຶ່ງແຕ່ລະປະເພດມີອາຍຸໜຶ່ງປີ;
2. ໄລຍະທີສອງ: ອອກໃບອະນຸຍາດສົມບູນ ຊຶ່ງມີອາຍຸຕາມແຕ່ລະປະເພດດັ່ງນີ້:

   - ໃບອະນຸຍາດປະເພດ 1 ມີອາຍຸນຳໃຊ້ ຫ້າປີ;
   - ໃບອະນຸຍາດປະເພດ 2 ມີອາຍຸນຳໃຊ້ ສາມປີ;
   - ໃບອະນຸຍາດປະເພດ 3 ມີອາຍຸນຳໃຊ້ ສອງປີ.

**ມາດຕາ 11. ການຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ**

**ກ. ເງື່ອນໄຂການຕໍ່ອາຍຸໃບອະນຸຍາດ**

ການຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ ຕ້ອງຍື່ນໃບຄຳຮ້ອງຂໍຕໍ່ ກ່ອນວັນໝົດອາຍຸຢ່າງໜ້ອຍ 30 ວັນ ແລະ ຕ້ອງມີເງື່ອນໄຂດັ່ງນີ້:

- ຕ້ອງປະກອບເອກະສານຢ່າງຄົບຖ້ວນ ຕາມທີ່ຂະແໜງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກຳນົດໄວ້ໃນເອກະສານຊ້ອນທ້າຍ;
- ຖ້າມີການນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ຕ້ອງມີໜັງສືຢັ້ງຢືນການຈ່າຍຄ່ານຳໃຊ້ຊັບພະຍາກອນດັ່ງກ່າວ;
- ຜູ້ໄດ້ຮັບໃບອະນຸຍາດຊົ່ວຄາວ ຖ້າຫາກບໍ່ສາມາດປະຕິບັດໄດ້ຕາມແຜນການໃນປີທຳອິດ ສາມາດຂໍຕໍ່ໃບອະນຸຍາດຊົ່ວຄາວ ໄດ້ອີກ 1 ຄັ້ງ ເທົ່ານັ້ນ;
- ຜູ້ໄດ້ຮັບໃບອະນຸຍາດຊົ່ວຄາວ ຈະໄດ້ຮັບການພິຈາລະນາ ຕໍ່ໃບອະນຸຍາດເປັນໃບອະນຸຍາດສົມບູນ ໃນກໍລະນີທີ່ຜູ້ຮ້ອງຂໍສາມາດປະຕິບັດໄດ້ຢ່າງໜ້ອຍ 60% ຂອງແຜນການປີທຳອິດ;

ຂ. ໄລຍະເວລາພິຈາລະນາຕໍ່ໃບອະນຸຍາດ

ໄລຍະເວລາການພິຈາລະນາຕໍ່ໃບອະນຸຍາດແຕ່ລະປະເພດມີດັ່ງນີ້:

- ໃບອະນຸຍາດປະເພດ 1: ໃຊ້ເວລາພິຈາລະນາພາຍໃນ 20 ວັນລັດຖະການ;
- ໃບອະນຸຍາດປະເພດ 2: ໃຊ້ເວລາພິຈາລະນາພາຍໃນ 15 ວັນລັດຖະການ;
- ໃບອະນຸຍາດປະເພດ 3: ໃຊ້ເວລາພິຈາລະນາພາຍໃນ 10 ວັນລັດຖະການ.

ໃນກໍລະນີເອກະສານຂອງຜູ້ຮ້ອງຂໍບໍ່ຄົບຖ້ວນ, ບໍ່ຖືກຕ້ອງ ຫຼື ບໍ່ມີເງື່ອນໄຂພຽງພໍ ທີ່ຈະໄດ້ຮັບອະນຸຍາດ, ອົງການຄຸ້ມຄອງ ແລະ ກວດກາ ຈະບໍ່ພິຈາລະນາອອກ ຫຼື ຕໍ່ໃບອະນຸຍາດໃຫ້.

ອົງການຄຸ້ມຄອງ ແລະ ກວດກາ ການບໍລິການອິນເຕີເນັດ ຈະແຈ້ງສາເຫດທີ່ບໍ່ພິຈາລະນາເປັນລາຍລັກອັກສອນພາຍໃນ 10 ວັນລັດຖະການ.

**ມາດຕາ 12. ການປ່ຽນແປງ, ໂຈະ ຫຼື ຍົກເລີກ**

ຜູ້ໃຫ້ບໍລິການອິນເຕີເນັດທີ່ຕ້ອງການປ່ຽນແປງເນື້ອໃນໃບອະນຸຍາດ, ໂຈະ ຫຼື ຍົກເລີກ ການໃຫ້ບໍລິການຂອງຕົນ ຕ້ອງໄດ້ຮັບອະນຸຍາດຈາກກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານກ່ອນ. ຜູ້ໃຫ້ບໍລິການອິນເຕີເນັດ ຕ້ອງສະເໜີພ້ອມຊີ້ແຈງເຫດຜົນຢ່າງເປັນລາຍລັກອັກສອນ.

**ມາດຕາ 13. ຂອບເຂດການໃຫ້ບໍລິການ ຂອງໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ**

ນິຕິບຸກຄົນທີ່ໄດ້ຮັບໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ ສາມາດໃຫ້ບໍລິການຕາມຂອບເຂດພື້ນທີ່ ແລະ ປະເພດບໍລິການ ທີ່ໄດ້ລະບຸໄວ້ໃນໃບອະນຸຍາດດຳເນີນທຸລະກິດຂອງຕົນເທົ່ານັ້ນ.

ຜູ້ໃຫ້ບໍລິການອິນເຕີເນັດ ສາມາດເລືອກເອົາປະເພດບໍລິການຂອງຕົນ ທີ່ກຳນົດໄວ້ໃນເອກະສານຂັດຕິດ ກ, ຂ, ຄ.

## ໝວດທີ 4
## ມາດຕະຖານເຕັກນິກ ແລະ ຄວາມປອດໄພ

**ມາດຕາ 14. ມາດຕະຖານ ເຕັກນິກ ແລະ ຄວາມປອດໄພ**

ມາດຕະຖານເຕັກນິກ ແລະ ຄວາມປອດໄພ ຂອງການບໍລິການອິນເຕີເນັດ ປະກອບມີດັ່ງລຸ່ມນີ້:

1. ມາດຕະຖານເຕັກນິກ

ກ. ສະຖານທີ່

- ຈຸດທີ່ຕັ້ງຂອງສູນບໍລິການອິນເຕີເນັດ ຕ້ອງຕັ້ງຢູ່ໃນຂອບເຂດທີ່ໄດ້ຮັບການອະນຸຍາດ.
- ຫ້ອງຄວບຄຸມລະບົບບໍລິການອິນເຕີເນັດ, ຫ້ອງຕິດຕັ້ງອຸປະກອນເຊີເວີ້, ຫ້ອງການ ແລະ ຫ້ອງອື່ນທີ່ຈຳເປັນ ຕ້ອງຮັບປະກັນລະບົບໄຟຟ້າ, ລະບົບຄວບຄຸມຄວາມເຢັນ, ລະບົບປ້ອງກັນອັກຄີໄພ ແລະ ລະບົບອື່ນໆທີ່ຈຳເປັນ ຕາມການກຳນົດມາດຖານຂອງກະຊວງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

ຂ. ການເຊື່ອມຕໍ່ຫາອິນເຕີເນັດ

- ໃບອະນຸຍາດປະເພດ 1: ການເຊື່ອມຕໍ່ຫາອິນເຕີເນັດ ຕ້ອງຜ່ານສູນອິນເຕີເນັດແຫ່ງຊາດເທົ່ານັ້ນ.
- ໃບອະນຸຍາດປະເພດ 2: ການເຊື່ອມຕໍ່ຫາອິນເຕີເນັດ ຕ້ອງຜ່ານສູນອິນເຕີເນັດແຫ່ງຊາດ ຫຼື ຈາກເຄືອຂ່າຍຂອງຜູ້ໃຫ້ບໍລິການອິນເຕີເນັດປະເພດ 1 ເທົ່ານັ້ນ.
- ໃບອະນຸຍາດປະເພດ 3: ການເຊື່ອມຕໍ່ຫາອິນເຕີເນັດ ຕ້ອງຜ່ານສູນອິນເຕີເນັດແຫ່ງຊາດ ຫຼື ຈາກເຄືອຂ່າຍຂອງຜູ້ໃຫ້ບໍລິການປະ ເພດ 1 ຫຼື 2 ເທົ່ານັ້ນ.

ຄ. ລະບົບເຄືອຂ່າຍ

- ໃນບົດວິພາກເຕັກນິກຕ້ອງມີແຜນວາດລວມຂອງເຄືອຂ່າຍ, ແຜນວາດການຕິດຕັ້ງອຸປະກອນ, ລາຍລະອຽດຂອງອຸປະກອນ ແລະ ລະບົບຊອບແວ ທີ່ຈະນຳໃຊ້.

ງ. ອຸປະກອນ

- ອຸປະກອນທີ່ຈະນຳເຂົ້າມາຈາກຕ່າງປະເທດເພື່ອຮັບໃຊ້ເຂົ້າໃນການບໍລິການ ຕ້ອງໄດ້ຮັບການອະນຸຍາດຈາກກະຊວງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.
- ອຸປະກອນທີ່ນຳມາໃຊ້ໃນລະບົບການບໍລິການອິນເຕີເນັດ ຕ້ອງໄດ້ຜ່ານການກວດກາ ແລະ ຢັ້ງຢືນຮັບຮອງມາດຕະຖານ ຈາກກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.
- ຕ້ອງມີການບຳລຸງຮັກສາ ແລະ ສ້ອມແປງໃຫ້ຢູ່ໃນສະພາບທີ່ໃຊ້ງານໄດ້ຢ່າງປົກກະຕິ ແລະ ຕ້ອງມີອຸປະກອນສຳຮອງເພື່ອໃຫ້ສາມາດບໍລິການໄດ້ຢ່າງບໍ່ມີຂໍ້ຈຳກັດ.

ຈ. ການເກັບຮັກສາປະຫວັດການນຳໃຊ້

- ຕ້ອງມີອຸປະກອນບັນທຶກ ແລະ ເກັບຮັກສາຂໍ້ມູນປະຫວັດການນຳໃຊ້ບໍລິການອິນເຕີເນັດ ຂອງຜູ້ຊົມໃຊ້ຢ່າງໜ້ອຍ 03 ເດືອນ ເຊັ່ນ: Log file, CDR file ແລະ ອື່ນໆ ຕາມການກຳນົດຂອງອົງການຄຸ້ມຄອງ ແລະ ກວດກາການບໍລິການອິນເຕີເນັດ.

2. ມາດຕະຖານຄວາມປອດໄພ

- ຕ້ອງຮັບປະກັນຄວາມປອດໄພຂໍ້ມູນທັງໝົດຂອງຜູ້ໃຊ້ບໍລິການ ບໍ່ໃຫ້ຖືກທຳລາຍ, ປ່ຽນແປງ ຫຼື ໂຈລະກຳ.
- ຕ້ອງມີລະບົບສຳຮອງຂໍ້ມູນ ເພື່ອຮັບປະກັນໃຫ້ນຳໃຊ້ໄດ້ຢ່າງເປັນປົກກະຕິ ແລະ ມີການປ້ອງກັນເຫດການທີ່ອາດເກີດຂຶ້ນ ເຊັ່ນ: ອັກຄີໄພ, ນ້ຳຖ້ວມ ແລະ ໄພທຳມະຊາດອື່ນໆ.
- ຕ້ອງມີລະບົບກັ່ນຕອງຂໍ້ມູນ ແລະ ລະບົບຮັກສາຄວາມປອດໄພ ເພື່ອປ້ອງກັນການເຂົ້າຫາເວັບໄຊ ແລະ ແຫຼ່ງຂໍ້ມູນທີ່ມີຜົນກະທົບທາງລົບຕໍ່ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ກະທົບເຖິງວຽກງານວັດທະນະທຳ - ສັງຄົມ.
- ຕ້ອງຮັບປະກັນ ບໍ່ໃຫ້ເປັນບ່ອນທີ່ຜູ້ບໍ່ຫວັງດີ ນຳໃຊ້ເພື່ອທຳລາຍ ຫຼື ສ້າງຄວາມເສຍຫາຍຕໍ່ຜູ້ອື່ນ.

## ໝວດທີ 5
## ການຄຸ້ມຄອງ ແລະ ກວດກາ ການບໍລິການອິນເຕີເນັດ

**ມາດຕາ 15. ອົງການຄຸ້ມຄອງ ແລະ ກວດກາ ການບໍລິການອິນເຕີເນັດ**

ອົງການຄຸ້ມຄອງ ແລະ ກວດກາ ການບໍລິການອິນເຕີເນັດ ມີດັ່ງນີ້:

- ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
- ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນ.

**ມາດຕາ 16. ສິດ ແລະ ໜ້າທີ່ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ**

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມີສິດ ແລະ ໜ້າທີ່ ດັ່ງນີ້:

**ຂອບເຂດສິດ:**

- ພິຈາລະນາອະນຸມັດ, ຕໍ່, ປ່ຽນແປງ, ໂຈະ ແລະ ຖອນ ໃບອະນຸຍາດບໍລິການອິນເຕີເນັດ;
- ຕິດຕາມ ແລະ ກວດກາການປະຕິບັດເງື່ອນໄຂ, ມາດຕະຖານ ແລະ ລະບຽບການ ຕາມຂໍ້ຕົກລົງສະບັບນີ້;
- ກ່າວເຕືອນ, ສຶກສາອົບຮົມ ຫຼື ປັບໃໝ ຕໍ່ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;
- ປະຕິບັດສິດອື່ນ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

**ໜ້າທີ່:**

- ພິຈາລະນາແກ້ໄຂຄຳສະເໜີ ກ່ຽວກັບການໃຫ້ບໍລິການອິນເຕີເນັດ ເປັນຕົ້ນ: ຄຸນນະພາບການບໍລິການ, ມາດຕະຖານເຕັກນິກ ແລະ ຄ່າບໍລິການຕ່າງໆ;
- ເກັບຄ່າທຳນຽມ ແລະ ຄ່າບໍລິການ ໃນການອອກໃບອະນຸຍາດໃຫ້ບໍລິການອິນເຕີເນັດ ແລະ ຄ່າອື່ນໆ ຕາມລະບຽບກົດໝາຍກຳນົດໄວ້;
- ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 17. ສິດ ແລະ ໜ້າທີ່ ຂອງພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານແຂວງ/ນະຄອນ**

ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

**ຂອບເຂດສິດ:**

- ພິຈາລະນາອອກ, ຕໍ່, ປ່ຽນແປງ, ໂຈະ ແລະ ຖອນ ໃບອະນຸຍາດບໍລິການອິນເຕີເນັດ ຕາມລະບຽບການທີ່ກະຊວງ ປທສ ກຳນົດໃຫ້;
- ຕິດຕາມ ແລະ ກວດກາ ການປະຕິບັດເງື່ອນໄຂ, ມາດຕະຖານ ແລະ ລະບຽບການ ຕາມຂໍ້ຕົກລົງສະບັບນີ້;
- ກ່າວເຕືອນ, ສຶກສາອົບຮົມ ຫຼື ປັບໃໝ ຕໍ່ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດຂໍ້ຕົກລົງສະບັບນີ້;
- ປະຕິບັດສິດອື່ນ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

ໜ້າທີ່:

- ພິຈາລະນາແກ້ໄຂຄຳສະເໜີ ກ່ຽວກັບການບໍລິການອິນເຕີເນັດ ເປັນຕົ້ນ ຄຸນນະພາບການບໍລິການ, ມາດຕະຖານເຕັກນິກ ແລະ ຄ່າບໍລິການ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
- ເກັບຄ່າທຳນຽມ ແລະ ຄ່າບໍລິການໃນການອອກໃບອະນຸຍາດບໍລິການອິນເຕີເນັດ;
- ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 18. ສິດ ແລະ ພັນທະ ຂອງຜູ້ໃຫ້ບໍລິການອິນເຕີເນັດ**

ຜູ້ໃຫ້ບໍລິການອິນເຕີເນັດ ມີສິດ ແລະ ພັນທະ ດັ່ງນີ້:

ຂອບເຂດສິດ:

- ສະເໜີຂໍຕໍ່, ໂຈະ ຫຼື ຍຸບເລີກ ການດຳເນີນທຸລະກິດຂອງຕົນ;
- ໂຈະການໃຫ້ບໍລິການແກ່ຜູ້ຊົມໃຊ້ ຕາມສັນຍາ;
- ປະຕິບັດສິດອື່ນ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

ພັນທະ:

- ໃຫ້ຄວາມຮ່ວມມືຕໍ່ພະນັກງານຂະແໜງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແລະ ເຈົ້າໜ້າທີ່ກ່ຽວຂ້ອງໃນການຕິດຕາມ ແລະ ກວດກາ;
- ອະນຸຍາດຜູ້ໃຫ້ບໍລິການອິນເຕີເນັດລາຍອື່ນເຊົ່າເຄືອຂ່າຍຂອງຕົນ ຕາມຄວາມເໝາະສົມ;
- ປະກອບສ່ວນເຂົ້າໃນວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ລາຍງານຂໍ້ມູນທີ່ເຫັນວ່າເປັນຜົນກະທົບເຖິງຄວາມໝັ້ນຄົງຂອງຊາດ ແລະ ຄວາມເປັນອັນຕະລາຍຕໍ່ສັງຄົມ;
- ປະຕິບັດລະບຽບການເຊື່ອມຕໍ່ອິນເຕີເນັດ ຕາມການກຳນົດໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້;
- ສະໜອງຂໍ້ມູນ ແລະ ສັນຍາການເຊື່ອມຕໍ່ອິນເຕີເນັດ ຢ່າງຄົບຖ້ວນ ແລະ ຖືກຕ້ອງໃຫ້ແກ່ຂະແໜງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
- ຮັກສາຂໍ້ມູນຂອງຜູ້ໃຊ້ບໍລິການໃຫ້ເປັນຄວາມລັບ ແລະ ປອດໄພ, ຍົກເວັ້ນກໍລະນີມີຄຳສັ່ງຈາກອົງການຈັດຕັ້ງທີ່ມີສິດອຳນາດກ່ຽວຂ້ອງ;
- ສະໜອງຂໍ້ມູນຂ່າວສານ ກ່ຽວກັບການບໍລິການຕ່າງໆໃຫ້ແກ່ຜູ້ຊົມໃຊ້ ຢ່າງເປັນປົກກະຕິ;
- ຮັບປະກັນການບໍລິການທີ່ມີຄຸນນະພາບ ແລະ ລາຄາຍຸຕິທຳ ຕາມລະບຽບກົດໝາຍທີ່ກຳນົດໄວ້;
- ແກ້ໄຂບັນຫາ ແລະ ຂໍ້ຂັດຂ້ອງ ທາງດ້ານເຕັກນິກໃຫ້ແກ່ຜູ້ຊົມໃຊ້ຕາມລະບຽບການ;
- ລາຍງານຂໍ້ມູນການບໍລິການອິນເຕີເນັດຂອງຕົນ ເຊັ່ນ: ການນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ, ດ້ານເຕັກນິກ ແລະ ຄວາມປອດໄພ ໃຫ້ຂະແໜງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຢ່າງເປັນປົກກະຕິ;
- ປະກອບສ່ວນ ແລະ ສົ່ງເສີມ ການນຳໃຊ້ອິນເຕີເນັດເຂົ້າໃນຂົງເຂດການສຶກສາ, ສາທາລະນະສຸກ, ເຂດຊົນນະບົດ ຫຼື ວຽກງານສາທາລະນະອື່ນໆ;
- ເສຍຄ່າທຳນຽມ, ຄ່າບໍລິການ ແລະ ອາກອນອື່ນໆໃຫ້ລັດຕາມລະບຽບກົດໝາຍ;
- ປະຕິບັດພັນທະອື່ນ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 19. ສິດ ແລະ ພັນທະ ຂອງຜູ້ໃຊ້ບໍລິການອິນເຕີເນັດ**

ຜູ້ໃຊ້ບໍລິການອິນເຕີເນັດ ມີສິດ ແລະ ພັນທະ ດັ່ງນີ້:

ຂອບເຂດສິດ:

- ເລືອກການຊົມໃຊ້ບໍລິການຕາມຄວາມຕ້ອງການ;
- ທວງຖາມ ຫຼື ຮ້ອງຟ້ອງຜູ້ໃຫ້ບໍລິການອິນເຕີເນັດເມື່ອບໍ່ໄດ້ຮັບບໍລິການທີ່ດີ;
- ປະຕິບັດສິດອື່ນ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

ພັນທະ:

- ຈ່າຍຄ່າບໍລິການຕາມລະບຽບການ;
- ຮັບຜິດຊອບຕໍ່ເນື້ອໃນຂໍ້ມູນ ຂ່າວສານຂອງຕົນ ທີ່ເປັນການລະເມີດລະບຽບກົດໝາຍ;
- ປະຕິບັດພັນທະອື່ນ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 6
## ຄ່າທຳນຽມ ແລະ ຄ່າບໍລິການ

**ມາດຕາ 20. ຄ່າທຳນຽມ ແລະ ຄ່າບໍລິການ**

ຄ່າທຳນຽມ ແລະ ຄ່າບໍລິການ ໃນການຂໍໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ ກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

## ໝວດທີ 7
## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 21. ມາດຕະການປັບໃໝ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ດັ່ງນີ້:

1. ດຳເນີນທຸລະກິດບໍລິການອິນເຕີເນັດໂດຍບໍ່ໄດ້ຮັບອະນຸຍາດຈະຖືກປັບໃໝ 50,000,000ກີບ;
2. ນຳໃບອະນຸຍາດໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫຼື ໂອນ ຈະຖືກປັບໃໝ 30,000,000 ກີບ ສຳລັບໃບອະນຸຍາດປະເພດໜຶ່ງ, 20,000,000 ກີບ ສຳລັບໃບອະນຸຍາດປະເພດສອງ ແລະ 10,000,000 ກີບ ສຳລັບໃບອະນຸຍາດປະເພດສາມ;
3. ບໍລິການເກີນປະເພດ ຫຼື ຂອບເຂດທີ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 10,000,000 ກີບ;
4. ຂະຫຍາຍເຄືອຂ່າຍ, ເຊື່ອມຕໍ່ເຄືອຂ່າຍ ຫຼື ດັດແປງລະບົບເຕັກນິກ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 10,000,000 ກີບ;
5. ເຊື່ອມຕໍ່ເຄືອຂ່າຍອອກສູ່ສາກົນໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 10,000,000 ກີບ;

6. ໂຄສະນາໃສ່ຮ້າຍປ້າຍສີ ຫຼື ສ້າງຄວາມເສຍຫາຍໃຫ້ຜູ້ບໍລິການລາຍອື່ນ ຈະຖືກປັບໃໝ 5,000,000 ກີບ;
7. ປອມແປງ, ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ, ເຊື່ອງອຳຂໍ້ມູນ ຫຼື ບໍ່ໃຫ້ຄວາມຮ່ວມມື ກັບອົງການຄຸ້ມຄອງ ແລະ ກວດກາການບໍລິການອິນເຕີເນັດ ຈະຖືກປັບໃໝ 3,000,000 ກີບ;
8. ບໍ່ເກັບກຳ ຫຼື ທຳລາຍຂໍ້ມູນການບໍລິການອິນເຕີເນັດ ຈະຖືກປັບໃໝ 3,000,000 ກີບ;
9. ເປີດເຜີຍຂໍ້ມູນສ່ວນຕົວຂອງຜູ້ໃຊ້ບໍລິການ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງ ຫຼື ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຈະຖືກປັບໃໝ 5,000,000 ກີບ;
10. ບໍລິການ ຫຼື ເກັບຄ່າບໍລິການ ທີ່ບໍ່ຖືກຕ້ອງຕາມສັນຍາ ຫຼື ບໍ່ຖືກຕ້ອງຕາມແຈ້ງການໃນສື່ຕ່າງໆ ຈະຖືກປັບໃໝ 5,000,000 ກີບ;
11. ບໍ່ຕໍ່ໃບອະນຸຍາດ ພາຍໃນ 30 ວັນ ຫຼັງຈາກໃບອະນຸຍາດໝົດອາຍຸແລ້ວ ຈະຖືກປັບໃໝ 2,000,000 ກີບ ສຳລັບໃບອະນຸຍາດປະເພດໜຶ່ງ, 1,000,000 ກີບ ສຳລັບໃບອະນຸຍາດປະເພດສອງ ແລະ 500,000 ກີບ ສຳລັບໃບອະນຸຍາດປະເພດສາມ;
12. ຜູກຂາດ ແລະ ກີດກັນ ຜູ້ໃຫ້ບໍລິການລາຍໃໝ່ ຈະຖືກປັບໃໝ 5,000,000 ກີບ;
13. ອຸດໜູນການບໍລິການ, ຄອບງຳ ຫຼື ໃຊ້ອຳນາດການຕະຫຼາດທີ່ບໍ່ເປັນທຳຕໍ່ຜູ້ປະກອບການລາຍຍ່ອຍ ຈະຖືກປັບໃໝ 5,000,000 ກີບ.

**ມາດຕາ 22. ມາດຕະການໂຈະ ແລະ ຖອນໃບອະນຸຍາດ**

ອົງການຄຸ້ມຄອງ ແລະ ກວດກາ ຈະໂຈະໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ ໃນກໍລະນີດັ່ງລຸ່ມນີ້:

1. ບໍລິການເກີນປະເພດ ຫຼື ຂອບເຂດທີ່ໄດ້ຮັບອະນຸຍາດ;
2. ປອມແປງ, ເຊື່ອງອຳຂໍ້ມູນ ຫຼື ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ຕາມການກຳນົດຂອງອົງການຄຸ້ມຄອງ ແລະ ກວດກາ ການໃຫ້ບໍລິການອິນເຕີເນັດ;
3. ຂະຫຍາຍເຄືອຂ່າຍ, ເຊື່ອມຕໍ່ເຄືອຂ່າຍ ຫຼື ດັດແປງລະບົບເຕັກນິກ ໂດຍບໍ່ໄດ້ຮັບອະນຸຍາດ;
4. ບໍ່ຊຳລະຄ່າຊັບພະຍາກອນໂທລະຄົມມະນາຄົມ;
5. ບໍ່ຕໍ່ໃບອະນຸຍາດ ພາຍໃນເວລາ 90 ວັນ ຫຼັງຈາກໃບອະນຸຍາດໝົດອາຍຸແລ້ວ;
6. ເຊື່ອມຕໍ່ເຄືອຂ່າຍອອກສູ່ສາກົນ ໂດຍບໍ່ຜ່ານສູນອິນເຕີເນັດແຫ່ງຊາດ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້;
7. ນຳໃຊ້ ຫຼື ເອື້ອອຳນວຍ ລະບົບອິນເຕີເນັດຂອງຕົນ ໄປໃນທາງທີ່ຜິດກົດໝາຍ;
8. ເກັບຄ່າບໍລິການບໍ່ຖືກຕ້ອງຕາມລະບຽບກົດໝາຍທີ່ກຳນົດໄວ້;
9. ບໍ່ຊຳລະຄ່າທຳນຽມ, ຄ່າບໍລິການ ຫຼື ອາກອນ ໃຫ້ລັດ ຕາມລະບຽບການ;
10. ຖືກປັບໃໝ ຕາມມາດຕາ 21 ຂອງຂໍ້ຕົກລົງສະບັບນີ້ ຈຳນວນ 2 ຄັ້ງ.

ອົງການຄຸ້ມຄອງ ແລະ ກວດກາ ຈະພິຈາລະນາຖອນໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ ໃນກໍລະນີ ດັ່ງລຸ່ມນີ້:

1. ຖືກໂຈະໃບອະນຸຍາດ ແຕ່ບໍ່ມີການປັບປຸງຕາມເງື່ອນໄຂທີ່ອົງການຄຸ້ມຄອງ ແລະ ກວດກາ ກຳນົດ;
2. ນຳໃບອະນຸຍາດໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫຼື ໂອນ ໂດຍບໍ່ໄດ້ຮັບອະນຸຍາດ;
3. ບໍ່ສືບຕໍ່ດຳເນີນການພາຍໃນໜຶ່ງປີ ຫຼັງຈາກໄດ້ຕໍ່ໃບອະນຸຍາດສົມບູນແລ້ວ;
4. ຖືກປັບໃໝ ຕາມມາດຕາ 21 ຂອງຂໍ້ຕົກລົງສະບັບນີ້ ຈຳນວນ 3 ຄັ້ງ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 23. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 24. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງທີ່ໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ຕົກລົງສະບັບນີ້ປ່ຽນແທນຂໍ້ກຳນົດວ່າດ້ວຍການຈັດຕັ້ງ, ການບໍລິການການນຳໃຊ້ລະບົບອິນເຕີເນັດ ຂອງ ສປປ ລາວ ສະບັບເລກທີ 141/ທສນຍ, ລົງວັນທີ 05 ເມສາ 2000.

ລັດຖະມົນຕີວ່າການ
ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ຫຼຽນ ທິມມະຈັນ

# ເອກະສານຊ້ອນທ້າຍ

1. ເອກະສານປະກອບ ໃນການຂໍອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ ມີດັ່ງນີ້:
   - ໃບຄຳຮ້ອງ;
   - ໃບຢັ້ງຢືນທີ່ຢູ່;
   - ບັດປະຈຳຕົວຂອງຜູ່ຂໍອະນຸຍາດ/ໜັງສືຜ່ານແດນ;
   - ຊີວະປະຫວັດລະອຽດຜູ້ບໍລິຫານ;
   - ຊີວະປະຫວັດຫຍໍ້ວິຊາການເຕັກນິກ ໃບຢັ້ງຢືນການສຶກສາ;
   - ບົດວິພາກເສດຖະກິດ;
   - ບົດວິພາກເຕັກນິກ;
   - ໃບຢັ້ງຢືນຖານະຄອບຄົວ;
   - ໃບທະບຽນວິສະຫະກິດ;
   - ໃບຢັ້ງຢືນຖານະການເງິນ/ບັນຊີເງິນເຄື່ອນໄຫວທຸລະກິດ;
   - ສັນຍາອື່ນໆທີ່ກ່ຽວຂ້ອງ (ເປັນຕົ້ນ: ສັນຍາເຊົ່າເຄືອຂ່າຍ, ສັນຍາເຊົ່າໂຄງລ່າງພື້ນຖານ ແລະ  ອື່ນໆ).

2. ເອກະສານປະກອບ ໃນການຂໍຕໍ່ອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ ມີດັ່ງນີ້:
   - ໃບຄຳຮ້ອງ;
   - ໃບຢັ້ງຢືນທີ່ຢູ່;
   - ບັດປະຈຳຕົວຂອງຜູ່ຂໍອະນຸຍາດ/ໜັງສືຜ່ານແດນ;
   - ໃບຢັ້ງຢືນຖານະການເງິນ;
   - ໃບທະບຽນວິສະຫະກິດ;
   - ໃບຢັ້ງຢືນການເສຍອາກອນ;
   - ບົດສະຫຼຸບທາງດ້ານການເຄື່ອນໄຫວຜ່ານມາ;
   - ໃບຢັ້ງຢືນການຈ່າຍຄ່ານຳໃຊ້ຊັບພະຍາກອນ;
   - ບົດສະຫຼຸບທາງດ້ານການເງິນ;
   - ສັນຍາອື່ນໆທີ່ກ່ຽວຂ້ອງ (ເປັນຕົ້ນ: ສັນຍາເຊົ່າເຄືອຂ່າຍ, ສັນຍາເຊົ່າໂຄງລ່າງພື້ນຖານ ແລະ  ອື່ນໆ).

# ເອກະສານ ຂັດຕິດ ກ.

ໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດປະເພດໜຶ່ງ

## I. ຂອບເຂດພື້ນທີ່ ໃຫ້ບໍລິການ

ຜູ້ໄດ້ຮັບໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດປະເພດໜຶ່ງ ສາມາດໃຫ້ບໍລິການໃນຂອບເຂດພື້ນທີ່ ທົ່ວປະເທດ.

## II. ລາຍການບໍລິການ

ຜູ້ໄດ້ຮັບໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດປະເພດໜຶ່ງ ສາມາດຂໍສິດການໃຫ້ບໍລິການດັ່ງນີ້:

1. ບໍລິການອິນເຕີເນັດແບບ Narrow band (Dial-up Modem) ຜ່ານສາຍໂທລະສັບ ໃນເຄືອຂ່າຍໂທລະສັບພື້ນຖານ (PSTN);
2. ບໍລິການອິນເຕີເນັດແບບ Broadband ຜ່ານສາຍໂທລະສັບ (xDSL);
3. ບໍລິການອິນເຕີເນັດຄວາມໄວສູງຜ່ານສາຍໄຍແກ້ວ (FTTx);
4. ບໍລິການອິນເຕີເນັດຄວາມໄວສູງຜ່ານສາຍເຄເບີນ (Internet over Cable TV);
5. ບໍລິການອິນເຕີເນັດຄວາມໄວສູງຜ່ານສາຍໄຟຟ້າ (Power Line);
6. ບໍລິການອິນເຕີເນັດແບບບໍ່ມີສາຍ (Wimax, WiFi, LTE, Sattelite);
7. ບໍລິການອິນເຕີເນັດຜ່ານເຄືອຂ່າຍໂທລະສັບມືຖື (GPRS, 3G, 4G, 5Gແລະ ອື່ນ);
8. ບໍລິການຄູ່ສາຍເຊົ່າຫຼືວົງຈອນເຊົ່າ (Leased Line);
9. ບໍລິການສາຍເຊົ່າສ່ວນບຸກຄົນ (IPLC, MPLSແລະອື່ນ);
10. ບໍລິການເຄືອຂ່າຍສ່ວນບຸກຄົນ (VPN);
11. ບໍລິການອິນເຕີເນັດຜ່ານຈານດາວທຽມຂະໜາດນ້ອຍ (VSAT);
12. ບໍລິການຝາກເວັບໄຊ ແລະ ຂໍ້ມູນ ຂ່າວສານ (Hosting);
13. ບໍລິການຈົດໝາຍ ເອເລັກໂຕຣນິກ (E-mail);
14. ບໍລິການໂທລະພາບ ຜ່ານອິນເຕີເນັດ (IPTV).

**ຫົວໜ້າກົມເຕັກໂນໂລຊີ ຂໍ້ມູນ ຂ່າວສານ**

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ
ກົມເຕັກໂນໂລຊີຂໍ້ມູນ-ຂ່າວສານ

ມີສິດ ອຳນາດຈະເລີນ

<u>ເອກະສານ ຊັດຕິດ ຂ.</u>

ໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດປະເພດສອງ

**I. ຂອບເຂດພື້ນທີ່ ໃຫ້ບໍລິການ**

ຜູ້ໄດ້ຮັບໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດປະເພດສອງ ສາມາດໃຫ້ບໍລິການໃນຂອບເຂດພື້ນທີ່ ແຂວງ ຫຼື ນະຄອນຫຼວງ.

**II. ປະເພດບໍລິການ**

ຜູ້ໄດ້ຮັບໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດປະເພດສອງ ສາມາດຂໍສິດການໃຫ້ບໍລິການ ດັ່ງນີ້:

1. ບໍລິການອິນເຕີເນັດແບບ Narrow band (Dial-up Modem) ຜ່ານສາຍໂທລະສັບ ໃນເຄືອຂ່າຍໂທລະສັບພື້ນຖານ (PSTN);
2. ບໍລິການອິນເຕີເນັດແບບ Broadband ຜ່ານສາຍໂທລະສັບ (xDSL);
3. ບໍລິການອິນເຕີເນັດຄວາມໄວສູງຜ່ານສາຍໄຍແກ້ວ (FTTx);
4. ບໍລິການອິນເຕີເນັດຄວາມໄວສູງຜ່ານສາຍເຄເບີນ (Internet over Cable TV);
5. ບໍລິການອິນເຕີເນັດແບບບໍ່ມີສາຍ (Wimax, WiFi, LTE);
6. ບໍລິການອິນເຕີເນັດ ຜ່ານເຄືອຂ່າຍໂທລະສັບມືຖື (GPRS, 3G, 4G, 5Gແລະ ອື່ນ);
7. ບໍລິການເຄືອຂ່າຍສ່ວນບຸກຄົນ (VPN);
8. ບໍລິການຝາກເວັບໄຊ ແລະ ຂໍ້ມູນ ຂ່າວສານ (Hosting);
9. ບໍລິການຈົດໝາຍ ເອເລັກໂຕຣນິກ (E-mail);
10. ບໍລິການ ໂທລະພາບ ຜ່ານເລກໝາຍອິນເຕີເນັດ (IPTV).

**ຫົວໜ້າກົມເຕັກໂນໂລຊີ ຂໍ້ມູນ ຂ່າວສານ**

ນິລິດ ອຳນາດຈະເລີນ

# <u>ເອກະສານ ຊັດຕິດ ຄ.</u>

## ໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດປະເພດສາມ

**I. ຂອບເຂດພື້ນທີ່ ໃຫ້ບໍລິການ**

ຜູ້ໄດ້ຮັບໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດປະເພດສາມ ສາມາດໃຫ້ບໍລິການໃນຂອບເຂດພື້ນທີ່ ເມືອງ.

**II. ປະເພດບໍລິການ**

ຜູ້ໄດ້ຮັບໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດປະເພດສາມ ສາມາດຂໍສິດການໃຫ້ບໍລິການດັ່ງນີ້:

1. ບໍລິການອິນເຕີເນັດແບບ Narrow band (Dial-up Modem)ຜ່ານສາຍໂທລະສັບໃນເຄືອຂ່າຍໂທລະສັບພື້ນຖານ (PSTN);
2. ບໍລິການອິນເຕີເນັດແບບ Broadband ຜ່ານສາຍໂທລະສັບ (xDSL);
3. ບໍລິການອິນເຕີເນັດຄວາມໄວສູງຜ່ານສາຍໃຍແກ້ວ (FTTx);
4. ບໍລິການອິນເຕີເນັດຄວາມໄວສູງຜ່ານສາຍເຄເບີນ (Internet over Cable TV);
5. ບໍລິການແບບບໍ່ມີສາຍ (Wimax, WiFi, LTE);
6. ບໍລິການອິນເຕີເນັດ ຜ່ານເຄືອຂ່າຍໂທລະສັບມືຖື (GPRS, 3G, 4G, 5Gແລະ ອື່ນ);
7. ບໍລິການເຄືອຂ່າຍສ່ວນບຸກຄົນ (VPN);
8. ບໍລິການຝາກເວັບໄຊ ແລະ ຂໍ້ມູນ ຂ່າວສານ (Hosting);
9. ບໍລິການຈົດໝາຍ ເອເລັກໂຕຣນິກ (E-mail);
10. ບໍລິການ ໂທລະພາບ ຜ່ານເລກໝາຍອິນເຕີເນັດ (IPTV).

**ຫົວໜ້າກົມເຕັກໂນໂລຊີ ຂໍ້ມູນ ຂ່າວສານ**

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ
ກົມເຕັກໂນໂລຊີຂໍ້ມູນ-ຂ່າວສານ

ມີສິດ ອຳນາດຈະເລີນ